# 07 ການແຊວ

## ກ່ອນຈະແຊງຂຶ້ນໜ້າ ຜູ້ຂັບຂີ່ຕ້ອງ

- ເມື່ອໄດ້ຮັບສັນຍານຂໍແຊງຂຶ້ນໜ້າ, ຜູ້ທີ່ຖືກແຊງ ຕ້ອງສັງເກດເບິ່ງທາງເບື້ອງໜ້າຂອງຕົນ ວ່າຮັບປະກັນຄວາມປອດໄພ ຫຼືບໍ່? ຈາກນັ້ນຈຶ່ງຜ່ອນຄວາມໄວລົງ, ເປີດໄຟສັນຍານລ້ຽວຂວາ, ແນບເຂົ້າແຄມທາງກໍ້າຂວາຂອງຕົນ ເພື່ອປ່ອຍທາງໃຫ້ຜູ້ແຊງຂຶ້ນໄປ
- ບໍ່ຄວນຂັບໄວເກີນຂີດຈຳກັດ
- ໃຫ້ແນ່ໃຈວ່າຖະໜົນທາງດ້ານໜ້າໂລ່ງ ແລະ ມີພື້ນທີ່ພຽງພໍໃນການຫຼີກ (ແນມເບິ່ງຖະໜົນດ້ານຂ້າງ ແລະ ເສັ້ນທາງອື່ນເພື່ອໃຫ້ແນ່ໃຈວ່າທ່ານສາມາດແຊງໄດ້)
- ແນມເບິ່ງແວ່ນລົດ
- ສົ່ງສັນຍານທຸກຄັ້ງເວລາປ່ຽນຊ່ອງຈະລາຈອນ ເພື່ອໃຫ້ຜູ້ຂັບຂີ່ຄົນອື່ນຮັບຮູ້
- ໃຫ້ສັງເກດສັນຍານລ້ຽວຂອງລົດຈັກ ແລະ ຍານພາຫະນະຄັນອື່ນ
- ແຊງຂຶ້ນໜ້າເມື່ອທາງໂລ່ງ ເພື່ອບໍ່ໃຫ້ເກີດອຸບປະຕິເຫດ



# ຈຸດອັບສາຍຕາ



## ການບໍ່ອະນຸຍາດໃຫ້ແຊງຂຶ້ນໜ້າ

- ລົດຄັນທາງໜ້າເປີດໄຟສັນຍານລ້ຽວຊ້າຍ
- ເມື່ອມີລົດທີ່ແລ່ນຕາມຫຼັງມາກຳລັງແຊງຂຶ້ນມາ
- ເຂດທາງແຍກທີ່ມີປ້າຍໄຟສັນຍານຈະລາຈອນ ຫຼື ເຂດທາງແຍກທີ່ບໍ່ມີການຄວບຄຸມ ເມື່ອສັນຈອນມາຕາມ ທາງທີ່ບໍ່ແມ່ນທາງໃຫຍ່
- ເຂດທາງມ້າລາຍ
- ເຂດຊຸມຊົນ ແລະ ເຂດທີ່ກຳລັງກໍ່ສ້າງທາງຫຼວງ
- ບ່ອນຂ້າມທາງລົດໄຟ ແລະ ກ່ອນເຖິງລາງລົດໄຟ ໃນໄລຍະ 100 m
- ເທິງຂົວ, ກ້ອງຂົວ, ໃນອຸບໂມງ
- ບ່ອນທາງຂຶ້ນຄ້ອຍ, ທາງໂຄ້ງອັນຕະລາຍ, ທາງແຄບ, ທາງຫຼຸບ, ທາງໂນນ, ທາງຄື້ນ, ເຂດທີ່ມີປ້າຍຫ້າມ ແຊງ, ເຂດເສັ້ນແບ່ງທິດທາງທີ່ເປັນເສັ້ນເຕັມ ແລະ ບ່ອນທີ່ໄລຍະການແນມເຫັນຈຳກັດ
- ເສັ້ນທາງແຄບ



ບໍ່ຄວນເຮັດ:

- ບໍ່ປ່ອຍໃຫ້ແຊງ ຫຼື ຂັດຂວາງການແຊງ ແລະ ເລັ່ງຄວາມໄວແຂ່ງກັບລົດທີ່ກຳລັງແຊງຂຶ້ນມາ
- ບໍ່ຄວນແຊງຍານພາຫະນະຄັນອື່ນຢູ່ທາງມ້າລາຍ

## ການຂັບລົດສວນທາງກັນ

- ໃນເມື່ອມີສິ່ງກີດຂວາງຢູ່ທາງໜ້າຂອງຕົນ ຜູ້ຂັບຂີ່ ຕ້ອງຢຸດ ເພື່ອປ່ອຍທາງໃຫ້ລົດສວນທາງມາໄປກ່ອນ
- ຖ້າສວນທາງກັນຢູ່ກາງຄ້ອຍທີ່ມີຄວາມຫຍຸ້ງຍາກ ຫຼື ມີອຸປະສັກກີດຂວາງ, ຜູ້ຂັບຂີ່ລົດທີ່ລົງຄ້ອຍຕ້ອງປ່ອຍ ໃຫ້ລົດທີ່ຂຶ້ນຄ້ອຍນັ້ນ ໄປກ່ອນ



## ຂົວ

- ເວລາຂັບເຂົ້າຂົວໃຫ້ ລະມັດລະວັງເນື່ອງຈາກວ່າ ທາງແຄບ ຖ້າຫາກວ່ າລົດສອງຄັນບໍ່ສາມາດຜ່ານ ຂົວແຄບໆ ໄດ້ພ້ອມກັນ ທ່ານຄວນຫຼີກທາງໃຫ້ຜູ້ ຂັບຂີ່ອີກຄັນໜຶ່ງທີ່ຢູ່ໃນຂົວ ຫຼື ເຂົ້າໃກ້ຂົວ ໄປກ່ອນ
- ເມື່ອລົດຂອງທ່ານຢູ່ໃນຂົວ ທີ່ມີຄວາມກວ້າງ ພຽງພໍສໍາລັບລົດສອງຄັນ. ໃຫ້ຂັບຊ້າໆ ແລະ ຂັບ ຂີ່ຢ່າງລະມັດ ລະວັງ ເພາະການແຊງລົດຢູ່ໃນຂົວ ເປັນອັນຕະລາຍ

